ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

==========000==========

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ວັນທີ: 28/03/2014

ມະຕິກອງປະຊຸມສະໄໝສາມັນຜູ້ຖືຮຸ້ນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳປີ 2013

ຄັ້ງວັນທີ 28/03/2014

ກອງປະຊຸມສະໄໝສາມັນຜູ້ຖືຮຸ້ນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳປີ 2013 ໄດ້ເປີດຂຶ້ນໃນເວລາ 09.35 ໂມງ ຂອງວັນທີ 28/03/2014 ທີ່ຫ້ອງປະຊຸມຊັ້ນ 8 ສຳນັກງານຕະຫຼາດຫຼັກຊັບລາວ ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມທັງໝົດໃນເວລາເລີ່ມເປີດກອງປະຊຸມຈຳນວນ **30** ທ່ານ, ເທົ່າກັບ **115,656,088** ຮຸ້ນ, ບັນລຸອັດຕາສ່ວນ **84.68 %** ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ກອງປະຊຸມໄດ້ພິຈາລະນາ ແລະ ຕົກລົງບັນຫາຕ່າງໆດັ່ງນີ້:

1. ກອງປະຊຸມມີມະຕິ ດ້ວຍຄະແນນສຽງ **115,656,088** ສຽງ ເທົ່າກັບ **100%** ຂອງຜູ້ເຂົ້າຮ່ວມທັງໝົດ ຮັບຮອງເອົາຜົນການດຳເນີນທຸລະກິດ ແລະ ເງິນປັນຜົນແກ່ຜູ້ຖືຮຸ້ນ ທຄຕລ ສຳລັບປີ 2013 ຄື:

- ຊັບສິນ: 16.906.423 ລ້ານກີບ.
- ເງິນຝາກ ແລະ ກູ້ຢືມມາ: 15.646.370 ລ້ານກີບ.
- ເງິນກູ້: 9.228.059 ລ້ານກີບ.
- ກຳໄລກອນອາກອນ: 250.627 ລ້ານກີບ.
- **ກຳໄລຫຼັງອາກອນ** **200.613 ລ້ານກີບ** ໂດຍແບ່ງເຂົ້າຄັງຕ່າງໆ ແລະ ເງິນປັນຜົນ ດັ່ງນີ້:
  - ແບ່ງເຂົ້າຄັງສະສົມຕາມລະບຽບ 20.061 ລ້ານກີບ
  - ແບ່ງເຂົ້າຄັງຂະຫຍາຍທຸລະກິດ 73.338 ລ້ານກີບ
  - ແບ່ງຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ 107.213 ລ້ານກີບ

➢ **ເງິນປັນຜົນຮຸ້ນປະຈຳປີ 2013: 785 ກີບ/ຮຸ້ນ.**

- ຈ່າຍແລ້ວງວດ 6 ເດືອນຕົ້ນປີ 2013: 405 ກີບ/ຮຸ້ນ.
- **ເງິນປັນຜົນ 6 ເດືອນທ້າຍປີ 2013: 380 ກີບ/ຮຸ້ນ.**

ສ່ວນການຈັດຕັ້ງປະຕິບັດແບ່ງເງິນປັນຜົນໃຫ້ຜູ້ຖືຮຸ້ນ ແມ່ນຈະປະຕິບັດໃຫ້ສຳເລັດພາຍໃນ 10 ວັນ ລັດຖະການ ພາຍຫລັງກອງປະຊຸມມື້ນີ້.

2. ກອງປະຊຸມມີມະຕິ ດ້ວຍຄະແນນສຽງ **115,656,088** ສຽງ ເທົ່າກັບ **100%** ຂອງຜູ້ເຂົ້າຮ່ວມທັງໝົດ ຮັບຮອງເອົາການແບ່ງປັນເງິນປັນຜົນຜູ້ຖືຮຸ້ນໃນປີ 2014 ເປັນ 2 ຄັ້ງ ຄື: ຈ່າຍງວດທີກເດືອນຕົ້ນປີ ແລະ ຈ່າຍງວດທີກເດືອນທ້າຍປີ ໂດຍງວດທຳອິດແມ່ນມອບໃຫ້ສະພາບໍລິຫານ ຫຼື ກອງປະຊຸມວິສາມັນຜູ້ຖືຮຸ້ນ ເປັນຜູ້ຕັດສິນ ພາຍຫຼັງທີ່ໄດ້ຮັບຜົນການກວດກາສອບບັນຊີປະຈຳທີກເດືອນຕົ້ນປີ.

3. ກອງປະຊຸມມີມະຕິ ດ້ວຍຄະແນນສຽງ **115,656,088** ສຽງ ເທົ່າກັບ **100%** ຂອງຜູ້ເຂົ້າຮ່ວມທັງໝົດ ຮັບຮອງເອົາແຜນການປີ 2014 ຂອງ ທຄຕລ ໂດຍມີບາງຕົວເລກຄາດໝາຍສູ້ຊົນດັ່ງນີ້:

   - ຊັບສິນ: 19.614.000 ລ້ານກີບ, ທຽບໃສ່ປີ 2013 ເພີ່ມຂຶ້ນ 16%.
   - ເງິນຝາກ: 17.500.000 ລ້ານກີບ, ທຽບໃສ່ປີ 2013 ເພີ່ມຂຶ້ນ 14%.
   - ເງິນກູ້: 11.250.000 ລ້ານກີບ, ທຽບໃສ່ປີ 2013 ເພີ່ມຂຶ້ນ 21%.
     + ຄວບຄຸມ NPL ບໍ່ໃຫ້ເກີນ 3 % ຂອງຈຳນວນເງິນກູ້ທັງໝົດ.
   - **ກຳໄລກ່ອນອາກອນ: 250 ຕື້ກີບ.**
   - ຮັບພະນັກງານເພີ່ມຈຳນວນ **80 ຄົນ**ໃນທົ່ວລະບົບ.
   - ປະກອບວັດຖຸເຕັກນິກ, ກໍ່ສ້າງ, ສ້ອມແປງ **297.356 ລ້ານກີບ**.

4. ກອງປະຊຸມມີມະຕິດ້ວຍຄະແນນສຽງ **115,656,088** ສຽງ ເທົ່າກັບ **100 %** ຂອງຜູ້ເຂົ້າຮ່ວມທັງໝົດ ຮັບຮອງເອົາແຜນການຈັດກອງປະຊຸມສະໄໝວິສາມັນຂອງຜູ້ຖືຮຸ້ນ ທຄຕລ ຂຶ້ນໃນກາງປີ 2014 ເພື່ອພິຈາລະນາ ແລະ ຮັບຮອງເອົາສະພາບໍລິຫານ ທຄຕລ ຊຸດໃໝ່ ພ້ອມທັງພິຈາລະນາ ແລະ ຮັບຮອງເອົາບັນຫາທີ່ສຳຄັນອື່ນໆຂອງ ທຄຕລ.

5. ກອງປະຊຸມມີມະຕິດ້ວຍຄະແນນສຽງ **115,656,088** ສຽງ ເທົ່າກັບ **100 %** ຂອງຜູ້ເຂົ້າຮ່ວມທັງໝົດ ຮັບຮອງເອົາ ບໍລິສັດ ເອີນແອນຢັງ ເປັນຜູ້ກວດສອບພາຍນອກສຳລັບປີ 2014.

ດັ່ງນັ້ນ, ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສຳຄັນສຳລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

ປະທານກອງປະຊຸມ

ບຸນໂຈມ ອຸບົນປະເສີດ
Bounchom UBONPASEUTH